# ສະບາຍດີປີໃຫມ່ ຈາກ ຫນູ ນິຣາວັນ

| | | |
|---|---|---|
| ສອງພັນສີ່ | ທ້າຍສິ້ນປີ | ຫນີໄກລັບ |
| ບໍ່ຫວນກັບ | ຫມູນວຽນ | ປ່ຽນສັງຂານ |
| ມວນມະນຸດ | ຕ່າງສຸຂສົມ | ຊົມຊື່ນບານ |
| ໃຈຫ້າວຫັນ | ຈິດປະສົງ | ສົ່ງທ້າຍປີ |
| | | |
| ປີເກົ່າໄປ | ປີໃຫມ່ມາ | ພາສົດຊື່ນ |
| ຈິດລາບລື້ນ | ຄວາມສຸຂສັນ | ພັນທະວີ |
| ຈົ່ງເລີ່ມຕົ້ນ | ສ້າງຜົລກັມ | ທຳຄວາມດີ |
| ຕລອດປີ | ສອງພັນຫ້າ | ຣ້າເຣີງໃຈ |
| | | |
| ຂໍສົ່ງພອນ | ຝາກກອນ | ແດ່ມວນມິດ |
| ທົ່ວທຸກທິດ | ຈົ່ງປະສົບ | ພົບສຸຂສັນ |
| ຢ່າໄດ້ມີ | ຄວາມທຸກໂສກ | ໂຣກພັຍພານ |
| ສັຕຣູມານ | ສິ່ງບໍ່ດີ | ໃຫ້ຫນີໄກ |
| | | |
| ວາຣະຖີ | ດີສົດຊື່ນ | ຂຶ້ນປີໃຫມ່ |
| ຈົ່ງມີຊັຍ | ລາພຫຼັ່ງລົ້ນ | ຍົດສັກສີ |
| ມາກມາຍມິດ | ເພື່ອນຮັກ | ປັກຮີດີ |
| ຂໍຢ່າມີ | ມານສັດຕຣູ | ສູ່ເຮືອນຊານ |
| | | |
| ທັງຊັພສິນ | ມາກສົມບັດ | ຈັດມາສູ່ |

ແດ່ເພື່ອນຜູ່ ຄູ່ຄິດ ທຸກທິດຖານ
ຈົ່ງມີຮັກ ປັກຈິດ ມິດເນີນນານ
ຕລອດກາລ ຢ່າລາຮ້າງ ຈາງຈາກໄປ

ໃນວາຣະ ລຶກດິຖີ ວັນປີໃຫມ່
ຂໍອວຍໄຊ ໃຫ້ຫມົດທຸກ ສຸຂຊີວັນ
ໃຫ້ວັນຊື່ນ ຄືນສຸຂ ຊົ່ວນິຣັນ
ພົບສິ່ງອັນ ດີງາມ ຕລອດໄປ

ຂໍຢ່າພົບ ຄວາມຫງອຍເຫງົາ ເສົ້າຫມອງໄຫມ້
ຂໍອໍານວຍ ອວຍພອນໄຊ ໃຫ້ສຸຂຂີ
ມີອາຍຸ ວັນນະ ພາລະດີ
ທັງສຸຂຂະ ຈົ່ງມາກມີ ຢ່າຫນີໄກ

ປະຕິບັດ ຫມັ່ນທໍາບຸນ ກຸສົລເຂົ້າ
ຄິດກ່ອນທໍາ ຄິດປາກເວົ້າ ຢ່າເມົາມານ
ໂປດເອື້ອເຟື້ອ ເຈືອຈູນ ສ້າງບຸນທານ
ຈະສໍາຣານ ພານພົບ ປະສົບດີ

ຈົ່ງລະຖິ້ມ ສິ່ງຊົ່ວຮ້າຍ ອະບາຍສິ້ນ
ໃຈມີສິລ ຈິດຜຸດຜ່ອງ ຢ່າຫມອງສີ
ສິ້ນຄວາມທຸກ ສົດໃສ ໃນຊີວີ
ຈົ່ງໂຊກດີ ສົມຫວັງ ທັງຄອບຄົວ